ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງການເງິນ**

ເລກທີ : 2834 /ກງ

ນະຄອນຫຼວງວຽງຈັນ, ວັນທີ : 30 AUG 2016

# ຂໍ້ກຳນົດ

# ຂອງກະຊວງການເງິນວ່າດ້ວຍ ການຈັດເກັບອາກອນມູນຄ່າເພີ່ມ ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ໃນອັດຕາ ສິບສ່ວນຮ້ອຍ (10%) ຂອງມູນຄ່າເຄື່ອງຂອງ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ການຕົກລົງເຫັນດີໃນກອງປະຊຸມຄະນະທີມງານເສດຖະກິດຂອງລັດຖະບານ ຄັ້ງວັນທີ 16 ສິງຫາ 2016.

ເພື່ອເຮັດໃຫ້ການຈັດເກັບອາກອນມູນຄ່າເພີ່ມ ມີຄວາມສະດວກ, ກະທັດຮັດ, ງ່າຍດາຍ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ຜູ້ໂດຍສານ ທີ່ເດີນທາງເຂົ້າ ສປປ ລາວ ສາມາດນຳເອົາເຄື່ອງຕິດຕົວເພື່ອຊົມໃຊ້ຊີວິດປະຈຳວັນ ທີ່ບໍ່ມີລັກສະນະທາງການຄ້າ ຜ່ານດ່ານພາສີຊາຍແດນ ໃຫ້ຖືກຕ້ອງ ແລະ ປະຕິບັດພັນທະຂອງຕົນຕໍ່ງົບປະມານແຫ່ງລັດ ຕາມກົດໝາຍ ແລະ ລະບຽບການກຳນົດ.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກຂໍ້ກຳນົດ :

1. ໃຫ້ລັດຖະການພາສີ ຄຸ້ມຄອງຈັດເກັບອາກອນມູນຄ່າເພີ່ມ ສຳລັບການນຳເຂົ້າເຄື່ອງຂອງຕິດຕົວຜູ້ໂດຍສານ ທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ດຳລົງຊີວິດຢູ່ ສປປ ລາວ ຊຶ່ງໄດ້ເດີນທາງເຂົ້າ ສປປ ລາວ ຜ່ານດ່ານພາສີຊາຍແດນ ລວມທັງດ່ານສະໜາມບິນສາກົນ ໃນອັດຕາສິບສ່ວນຮ້ອຍ (10%) ຂອງມູນຄ່າເຄື່ອງຂອງ;
2. ຜູ້ໂດຍສານ ທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດທີ່ເດີນທາງເຂົ້າ ສປປ ລາວ ຕ້ອງໄດ້ແຈ້ງເສຍອາກອນມູນຄ່າເພີ່ມ ຕາມອັດຕາທີ່ກຳນົດໄວ້ໃນ ຂໍ້ທີ 1 ຂອງຂໍ້ກຳນົດສະບັບນີ້;

ສຳລັບຜູ້ໂດຍສານ ທີ່ເດີນທາງເຂົ້າ ຜ່ານດ່ານພາສີຊາຍແດນເປັນບາງຄັ້ງຄາວ ຫຼື ບໍ່ມີລັກສະນະປະຈຳ (ບໍ່ເກີນສອງຄັ້ງ/ເດືອນ) ຊຶ່ງໄດ້ຊື້ເຄື່ອງຂອງມາຊົມໃຊ້ ແລະ ນຳເຂົ້າເຄື່ອງຂອງ ທີ່ບໍ່ມີລັກສະນະການຄ້າ ຫຼື ຈຸດປະສົງທາງການຄ້າ, ມີມູນຄ່າບໍ່ສູງ ແລະ ເປັນເຄື່ອງຂອງທີ່ຮັບໃຊ້ໃນການດຳລົງຊີວິດປະຈຳວັນ ແມ່ນໄດ້ຮັບການຍົກເວັ້ນໃນມູນຄ່າບໍ່ເກີນຫ້າສິບ (50) ໂດລາສະຫະລັດ, ສ່ວນມູນຄ່າທີ່ເກີນ ຕ້ອງໄດ້ແຈ້ງເສຍອາກອນມູນຄ່າເພີ່ມ;

3. ສຳລັບຜູ້ໂດຍສານ ທີ່ເດີນທາງເຂົ້າ ສປປ ລາວ ເປັນລັກສະນະປະຈຳ ຜ່ານດ່ານພາສີຊາຍແດນ ລວມທັງດ່ານສະໜາມບິນສາກົນ ແມ່ນບໍ່ໄດ້ຮັບການຍົກເວັ້ນເຄື່ອງຂອງຕິດຕົວຜູ້ໂດຍສານ ໃນມູນຄ່າຫ້າສິບ (50) ໂດລາສະຫະລັດ ແລະ ຈະຖືກຄິດໄລ່ເກັບອາກອນມູນຄ່າເພີ່ມ ຕາມມູນຄ່າຕົວຈິງທີ່ມີການນຳເຂົ້າ;
4. ພື້ນຖານ ແລະ ວິທີຄິດໄລ່ອາກອນມູນຄ່າເພີ່ມ
   - ພື້ນຖານຄິດໄລ່ ແມ່ນໃຫ້ກຳນົດເອົາມູນຄ່າຊື້-ຂາຍເຄື່ອງຂອງ ຢູ່ປະເທດຕົ້ນທາງທີ່ບໍ່ລວມອາກອນມູນຄ່າເພີ່ມ (VAT) ຊຶ່ງມີມູນຄ່າເກີນ ຫ້າສິບ (50) ໂດລາສະຫະລັດ (ຫຼື ທຽບເທົ່າສະກຸນເງິນກີບ ຫຼື ສະກຸນເງິນອື່ນ ຕາມອັດຕາແລກປ່ຽນທະນາຄານ) ຕໍ່ຄົນ/ຄັ້ງ;
   - ວິທີຄິດໄລ່ ອາກອນມູນຄ່າເພີ່ມ ແມ່ນໃຫ້ຖືເອົາພື້ນຖານຄິດໄລ່ທີ່ລະບຸໄວ້ໃນ ຂີດໜ້າທີໜຶ່ງຂອງຂໍ້ທີ 4 ເທິງນີ້ ຄູນ (X) ກັບອັດຕາອາກອນມູນຄ່າເພີ່ມ (10%).
5. ການປະເມີນມູນຄ່າການນຳເຂົ້າເຄື່ອງຂອງຕິດຕົວຜູ້ໂດຍສານ ໃນກໍລະນີຜູ້ໂດຍສານ ມີໃບເກັບເງິນບໍ່ຄົບຖ້ວນ ຫຼື ໃບເກັບເງິນບໍ່ຊັດເຈນ ຫຼື ບໍ່ມີ ເຈົ້າໜ້າທີ່ພາສີ ມີສິດປະເມີນມູນຄ່າເຄື່ອງຂອງດັ່ງກ່າວໃຫ້ແທດເໝາະກັບຄວາມເປັນຈິງ ເພື່ອເປັນພື້ນຖານຄິດໄລ່ໃນການຈັດເກັບອາກອນມູນຄ່າເພີ່ມ;
6. ມອບໃຫ້ກົມພາສີ ກຳນົດບູລິມະສິດບັນດາດ່ານພາສີຊາຍແດນ ທີ່ມີເງື່ອນໄຂໃນການຈັດຕັ້ງປະຕິບັດ, ອອກຄຳແນະນຳທາງດ້ານວິຊາການລະອຽດ ກ່ຽວກັບຂັ້ນຕອນ, ວິທີການ, ກຳນົດແບບພິມໃບແຈ້ງ, ກົນໄກການມອບເງິນ ແລະ ເຜີຍແຜ່ ແນະນຳ ໃຫ້ພະນັກງານ, ເຈົ້າໜ້າທີ່ພາສີ, ບຸກຄົນ ແລະ ນິຕິບຸກຄົນ ຫຼື ການຈັດຕັ້ງໃນສັງຄົມ ຮັບຊາບຢ່າງທົ່ວເຖິງ ແລະ ພ້ອມທັງມີການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ລາຍງານຕໍ່ກະຊວງການເງິນ ເປັນແຕ່ລະໄລຍະ ເພື່ອຈັດຕັ້ງປະຕິບັດຕາມຂໍ້ກຳນົດສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ;
7. ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ທີ່ໄດ້ລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີກະຊວງການເງິນ**

**ສົມດີ ດວງດີ**